ສະໜັບສະໜູນການສ້າງຕຳລາສະບັບໂດຍ ລັດຖະບານອິດສະຕຣາລີ, ສະຫະພາບເອີຣົບ ແລະ ງົບປະມານແຫ່ງລັດ
ຈັດພິມຈຳໜ່າຍໂດຍ ບໍລິສັດລັດວິສາຫະກິດໂຮງພິມສຶກສາ (ພິມຄັ້ງທີ 2)
ຕາມທະບຽນພິມ.....ຈຳນວນພິມ 30.000 ຫົວ
ຂະໜາດ 18 x 25 cm
ISBN.....

ສະຫງວນລິຂະສິດ

ແບບຮຽນ

ຄຸນສົມບັດສຶກສາ

ຊັ້ນປະຖົມສຶກສາ ປີທີ 1



ກະຊວງສຶກສາທິການ ແລະ ກີລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2020

ແບບຮຽນ ຄຸນສົມບັດສຶກສາ ຊັ້ນປະຖົມສຶກສາ ປີທີ 1



ທໍ່ປຶ້ມດ້ວຍເຈ້ຍ ຫຼື ແຜ່ນຢາງ



ຖ້າປຶ້ມຈີກຂາດໃຫ້ສ້ອມແປງຄືນ



ຖ້າປຶ້ມເສຍໃຫ້ລາຍໆຫນຄູ



ຈົ່ງເກັບປຶ້ມໄວ້ບ່ອນທີ່ແຫ້ງ ແລະ ເໝາະສົມ



ບໍ່ຄວນພັບໜ້າປຶ້ມເມື່ອຕ້ອງການໝາຍໜ້າໃດໜຶ່ງ
ຈົ່ງໃຊ້ສິ່ງຂອງບາງຢ່າງຂັ້ນໄວ້ທຸກເທື່ອ



ບໍ່ໃຊ້ປຶ້ມແທນຄັນຮົ່ມເວລາຝົນຕົກ,
ແດດຮ້ອນ



ບໍ່ຄວນຂຽນໃສ່ຫຼັງປົກປຶ້ມ, ໜ້າປຶ້ມ, ບໍ່ຕັດຮູບພາບ
ແລະ ບໍ່ຈີກປຶ້ມ

ຮູບນີ້ໄດ້ມາຈາກໂປສະເຕີວິທີຮັກສາປຶ້ມ ທີ່ຜະລິດໂດຍ ກະຊວງສຶກສາທິການ
ແລະ ກິລາ ຮ່ວມກັບ ອົງການ ອຸຍນິເຊັຟ (UNICEF)

ແບບຮຽນ
ຄຸນສົມບັດສຶກສາ

ຊັ້ນປະຖົມສຶກສາ ປີທີ 1

ຮຽບຮຽງໂດຍ: ພັນສອນ ທັນນະວົງ
ມີໄຊສະຫວັດ ແສງສະຫວ່າງ
ພຸດທະວັນ ພົມມະທອງ
ສາຍຄຳ ແກ້ວສະໝອນ

ກວດແກ້ໂດຍ: ອ່ອນແກ້ວ ນວນນະວົງ
ແສງເງິນ ໄວຍະກອນ

ພິມເຂົ້າໜ້າໂດຍ: ດວງມາລາ ນາກບຸນຕາ

ແຕ້ມຮູບໂດຍ: ນິວົງ ແສງສະກຸນ
ອຸ່ນຫຼ້າ ສັນຕິ

ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2019

ຄຳນຳ

ປຶ້ມແບບຮຽນວິຊາຄຸນສົມບັດສຶກສາ ສະບັບນີ້ໄດ້ຮຽບຮຽງຂຶ້ນຕາມຫຼັກສູດຊັ້ນປະຖົມສຶກສາ ປີ 2016 ແລະ ເປັນປຶ້ມປະກອບການຮຽນເພື່ອສົ່ງເສີມໃຫ້ນັກຮຽນໄດ້ຮຽນກ່ຽວກັບຄວາມຮູ້ ແລະ ທັກສະທີ່ສຳຄັນ ໃນວິຊາຄຸນສົມບັດສຶກສາ.

ປຶ້ມແບບຮຽນນີ້ປະກອບດ້ວຍບົດຮຽນ 30 ບົດ ໂດຍເນັ້ນໃສ່ເນື້ອໃນທີ່ສຳຄັນຂອງວິຊາຄຸນສົມບັດສຶກສາ ຂັ້ນ ປ.1 ດັ່ງນີ້:

ດ້ານການປະພຶດ: ນັກຮຽນຈະໄດ້ຮຽນຮູ້ກ່ຽວກັບການໃຫ້ຄວາມເຄົາລົບນັບຖືບຸກຄົນອື່ນ ແລະ ສະພາບ ແວດລ້ອມຂອງພວກເຂົາ ແລະ ສັນຍະລັກຕ່າງໆເຊັ່ນ: ທຸງຊາດ, ການປະພຶດທີ່ດີ, ສະແດງອອກດ້ານ ຄວາມກະຕັນຍູຮູ້ຄຸນ, ຄວາມທ້າທາຍ, ຄວາມຊື່ສັດ, ຄວາມມີເມດຕາ ແລະ ການມີວິໄນ.

ດ້ານສິດທິ ແລະ ກົດລະບຽບ: ນັກຮຽນຈະໄດ້ຮຽນຮູ້ກ່ຽວກັບລະບຽບການນຸ່ງຖື, ການນຳໃຊ້ຖະໜົນ ຢ່າງປອດໄພ ແລະ ກົດຈະວັດປະຈຳວັນຢູ່ໂຮງຮຽນ.

ດ້ານຄວາມຮັບຜິດຊອບ: ນັກຮຽນຈະໄດ້ຮຽນກ່ຽວກັບການມີຄວາມຮັບຜິດຊອບຕໍ່ສິ່ງຂອງຂອງຕົນ, ການຮັກສາຄວາມສະອາດຂອງຮ່າງກາຍ ແລະ ເຂົ້າໃຈເຖິງຄວາມສຳຄັນຂອງການປະຢັດ.

ເຖິງຢ່າງໃດກໍຕາມ, ການຮຽບຮຽງປຶ້ມແບບຮຽນເຫຼັ້ມນີ້ ກໍຄົງບໍ່ປາສະຈາກໄດ້ຂໍ້ຂາດຕົກບົກພ່ອງ ບາງປະການ ສະນັ້ນ, ຖ້າທ່ານພົບເຫັນຈຸດບົກພ່ອງ ຫຼື ຈຸດຜິດພາດຂໍໃຫ້ໃຫ້ສົ່ງຄຳຄິດເຫັນຂອງທ່ານມາຍັງ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມແບບຮຽນສະບັບນີ້ ມີຄວາມຍິນດີເປັນຢ່າງຍິ່ງທີ່ຈະຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສາລະບານ

ບົດທີ 1	ການຍ່າງຕາມຂອບທາງຢ່າງຖືກຕ້ອງ	1
ບົດທີ 2	ໂຮງຮຽນຂອງພວກເຮົາ	3
ບົດທີ 3	ການປະຕິບັດລະບຽບວິໄນຂອງໂຮງຮຽນ	5
ບົດທີ 4	ການຮັກສາຄວາມສະອາດໃນໂຮງຮຽນ	9
ບົດທີ 5	ມາລະຍາດຕໍ່ຄູ	12
ບົດທີ 6	ການຂອບໃຈ ແລະ ຂໍໂທດ	14
ບົດທີ 7	ຄວາມຮັກແພງໝູ່ເພື່ອນໃນໂຮງຮຽນ	16
ບົດທີ 8	ການເຄົາລົບທຸງຊາດ	18
ບົດທີ 9	ການຮັກສາເຄື່ອງຮຽນ ແລະ ເຄື່ອງໃຊ້	21
ບົດທີ 10	ການນຸ່ງເຄື່ອງເປັນລະບຽບ ແລະ ສຸພາບ	23
ບົດທີ 11	ນັກຮຽນດຸໝັ່ນ	25
ບົດທີ 12	ຄວາມສັດຊື່ຕໍ່ການຮຽນ	28
ບົດທີ 13	ຄວາມສັດຊື່ຕໍ່ຕົນເອງ	30
ບົດທີ 14	ກ້າຮັບຜິດ ແລະ ປ່ຽນແປງ	32
ບົດທີ 15	ການໃຫ້ ແລະ ການຮັບທີ່ບໍ່ຖືກຕ້ອງ	34
ບົດທີ 16	ການເປັນແບບຢ່າງໃຫ້ນ້ອງ	36
ບົດທີ 17	ຄວາມກ້າຫານ	38
ບົດທີ 18	ການແບ່ງປັນສິ່ງຂອງ	40
ບົດທີ 19	ຄອບຄົວຂອງຂ້ອຍ	42
ບົດທີ 20	ມາລະຍາດຕໍ່ຄອບຄົວ	44
ບົດທີ 21	ການຊ່ວຍວຽກຄອບຄົວ	47
ບົດທີ 22	ຄວາມເມດຕາຕໍ່ຄົນໃນຄອບຄົວ	50
ບົດທີ 23	ຄວາມກະຕັນຍູຕໍ່ຄອບຄົວ	52
ບົດທີ 24	ການເຄົາລົບສະຖານທີ່ໃນເຮືອນ	54
ບົດທີ 25	ການເຄົາລົບນັບຖືຜູ້ອາວຸໂສ	56
ບົດທີ 26	ມາລະຍາດໃນທີ່ສາທາລະນະ	58

ບົດທີ 27 ການຮັກສາສິ່ງຂອງສ່ວນລວມ 60
ບົດທີ 28 ການຮັກແພງເພື່ອນບ້ານດຸງອກັນ 62
ບົດທີ 29 ການເຄົາລົບນັບຖືຄົນໃນຊຸມຊົນ 64
ບົດທີ 30 ກ່ອນປິດສົກຮຽນ 66

ບົດທີ 1 ການຍ່າງຕາມຂອບທາງຢ່າງຖືກຕ້ອງ

ມາສັງເກດຮູບພາບນຳກັນ

1 ເດັກນ້ອຍກຳລັງຍ່າງຕາມທາງ ນັກຮຽນຍ່າງຖືກຕາມກົດຈະລາຈອນແລ້ວບໍ?



2 ພວກເດັກນ້ອຍກຳລັງຍ່າງຕາມແຄມທາງ ນັກຮຽນຄວນຍ່າງແບບໃດ?



3 ເດັກນ້ອຍແລ່ນໄລ່ຢອກກັນຢູ່ແຄມທາງ ນັກຮຽນຄວນເຮັດຕາມບໍ? ເຮົາຄວນແລ່ນໄລ່ຢອກກັນຢູ່ບ່ອນໃດ?



4 ຕຳຫຼວດກຳລັງເຮັດຫຍັງກັບພວກນັກຮຽນເຫຼົ່ານັ້ນ?



ວິທີຍ່າງຕາມຂອບທາງໃຫ້ຖືກຕ້ອງຄື: ຕ້ອງມີສະຕິລະວັງຕົວຢູ່ສະເໝີໃນເວລາຍ່າງຕໍ່ແຖວບໍ່ຍ່າງຂວາງທາງລົດ, ບໍ່ຍ່າງເປັນແພລຸງນກັນ. ແນມເບິ່ງເສັ້ນທາງຟັງສຽງສິ່ງອ້ອມຂ້າງ, ງວາກຊ້າຍງວາກຂວາ, ຕາແນມໄປຂ້າງໜ້າ ແລະ ລະມັດລະວັງສິ່ງທີ່ຈະມາທາງຫຼັງ ເພື່ອໃຫ້ມີຄວາມປອດໄພ.


ບົດທີ 2 ໂຮງຮຽນຂອງພວກເຮົາ

ມາສັງເກດຮູບພາບນຳກັນ

1 ສະຖານທີ່ນີ້ຢູ່ໃສ? ນັກຮຽນຍິງ ແລະ ນັກຮຽນຊາຍກຳລັງເຮັດຫຍັງ?



2 ນັກຮຽນຍິງກຳລັງເຮັດຫຍັງຢູ່ໜ້າກະດານ?



3 ນາຍຄູກຳລັງພານັກຮຽນເຮັດຫຍັງ? ເຄື່ອງທີ່ນັກຮຽນໃສ່ສຳລັບຮຽນວິຊາຫຍັງ?



4 ນັກຮຽນມອບຫຍັງໃຫ້ນາຍຄູ? ການມອບຊໍ່ດອກໄມ້ໃຫ້ຄູເນື່ອງໃນວັນສຳຄັນຫຍັງ?



ໂຮງຮຽນມີຄຸນປະໂຫຍດຫຼາຍສຳລັບທຸກຄົນ ເພາະແມ່ນບ່ອນຮຽນໜັງສື, ບ່ອນປະຕິບັດກິດຈະກຳກິລາ, ສິລະປະ ແລະ ເປັນບ່ອນອົບຮົມສັ່ງສອນໃຫ້ນັກຮຽນທຸກຄົນເປັນຄົນດີ, ທຸກຄົນຕ້ອງຮັກ ແລະ ປົກປັກຮັກສາໂຮງຮຽນໃຫ້ສະອາດຈີບງາມ.


ບົດທີ 3 ການປະຕິບັດລະບຽບວິໄນຂອງໂຮງຮຽນ

ມາສັງເກດຮູບພາບນຳກັນ

1 ນັກຮຽນເຄີຍລຽນແຖວກ່ອນເຂົ້າຫ້ອງບໍ? ການລຽນແຖວກ່ອນເຂົ້າຫ້ອງແມ່ນການປະຕິບັດຕາມລະບຽບຂອງໂຮງຮຽນບໍ?



2 ນັກຮຽນໃນຫ້ອງກຳລັງເຮັດຫຍັງ? ເວລາຄູກຳລັງສອນນັກຮຽນຄວນເຮັດແນວໃດ?



3 ນັກຮຽນຈີກປຶ້ມຫຼິ້ນຄວນເອົາເປັນແບບຢ່າງບໍ? ຄວນເອົາແບບຢ່າງໃຜໃນຮູບ?



4 ນັກຮຽນໃນຫ້ອງກຳລັງເຮັດຫຍັງ? ເວລາຄູກຳລັງສອນນັກຮຽນຄວນເຮັດແນວໃດ?



5 ແຕ່ລະຄົນໃນຮູບກຳລັງເຮັດຫຍັງ? ນັກຮຽນຈະເຮັດແນວໃດ ຖ້າເຫັນໝູ່ທຸກຄົນໃນ ໂຮງຮຽນກຳລັງອອກແຮງງານ.





6 ຂີດຂຽນໃສ່ໂຕະ ຫຼື ຝາຫ້ອງຮຽນຄວນເຮັດບໍ່? ນັກຮຽນຈະເຮັດແນວໃດ ຖ້າເຫັນ ຄົນກຳລັງເຮັດຄືໃນຮູບພາບ?



ກິດລະບຽບຂອງໂຮງຮຽນວາງອອກ ເພື່ອໃຫ້ນັກຮຽນທຸກຄົນປະຕິບັດຖືກຕ້ອງຕາມກາມ ກຳນົດຂອງໂຮງຮຽນ, ເວລາມາໂຮງຮຽນຕ້ອງນຸ່ງເຄື່ອງຊຸດນັກຮຽນໃຫ້ເປັນລະບຽບ ແລະ ປະ ຕິບັດກິດລະບຽບວິໄນຂອງໂຮງຮຽນຢ່າງຖືກຕ້ອງ.

ລະບຽບໃນຫ້ອງຮຽນ ສຳລັບ ຂັ້ນ ປ.1

ຕາແນມເບິ່ງກະດານ/ຄູ	ມິດ/ບໍ່ໃຫ້ລົມກັນ
	
ຫູຕັ້ງໃຈຟັງ	ນັ່ງເປັນລະບຽບ (ວາງ ມື ແລະ ຕີນເປັນລະບຽບ)
	
ຍົກມືຂຶ້ນເພື່ອຂໍອະນຸຍາດຖາມ ຫຼື ຕອບ	ການຍ່າງໃນບໍລິເວນຫ້ອງຮຽນ
	
ເຮັດບົດຝຶກຫັດດ້ວຍຕົນເອງ	
	

ບົດທີ 4 ການຮັກສາຄວາມສະອາດໃນໂຮງຮຽນ

ມາສັງເກດຮູບພາບນຳກັນ

1 ຫ້ອງຮຽນເປັນແນວໃດ? ສະອາດດີແລ້ວບໍ່?




2 ເປັນຫຍັງໃນຫ້ອງຮຽນ ແລະ ນອກຫ້ອງຮຽນຈຶ່ງຮົກ ແລະ ເປື້ອນ? ນັກຮຽນໃນຮູບພາບກຳລັງ ເຮັດຫຍັງ? ເຮົາຄວນເຮັດຕາມບໍ່? ຍ້ອນຫຍັງ?



3 ນັກຮຽນໃນຮູບພາບກຳລັງເຮັດຫຍັງ? ພວກເຂົາໃຊ້ອຸປະກອນຊະນິດໃດແດ່ເຮັດອະນາໄມ?



4 ໂຮງຮຽນເປັນແນວໃດ? ເປັນຫຍັງໂຮງຮຽນຈຶ່ງສະອາດຈົບງາມ?



5 ນັກຮຽນຖິ້ມຂີ້ເຫຍື້ອຖືກບ່ອນແລ້ວບໍ? ຖ້າວ່າພວກເຮົາຖິ້ມຂີ້ເຫຍື້ອບໍ່ຖືກບ່ອນຈະເປັນແນວໃດ?



6 ນັກຮຽນກຳລັງເຮັດຫຍັງ? ການເຮັດອະນາໄມເພື່ອຫຍັງ? ຖ້າບໍ່ເຮັດອະນາໄມໂຮງຮຽນຈະເປັນແນວໃດ?



ໂຮງຮຽນເປັນບ່ອນໃຫ້ຄວາມຮູ້, ເຮົາທຸກຄົນຕ້ອງຮູ້ຮັກໂຮງຮຽນຄືກັບຮັກເຮືອນຂອງຕົນເອງ ສະນັ້ນ, ການຮັກສາຄວາມສະອາດຂອງໂຮງຮຽນ, ຫ້ອງຮຽນແມ່ນມີຄວາມສຳຄັນຫຼາຍ ແລະ ເປັນໜ້າທີ່ຂອງພວກເຮົາໝົດທຸກຄົນທັງເປັນສະຖານທີ່ຂອງນັກຮຽນໃຊ້ເປັນບ່ອນຮຽນຮູ້.

ບົດທີ 5 ມາລະຍາດຕໍ່ຄູ

ມາສັງເກດຮູບພາບນຳກັນ


1 ນັກຮຽນກຳລັງເຮັດຫຍັງເມື່ອພົບຄູ? ນັກຮຽນໄດ້ປະຕິບັດຕໍ່ຄູທຸກມື້ບໍ່?



2 ເວລາເຂົ້າຫ້ອງແລ້ວຍ່າງຜ່ານໜ້າຄູນັກຮຽນຄວນເຮັດແນວໃດ? ຍ່າງດ້ວຍຄວາມລະມັດລະວັງ ແລະ ກົ້ມຫົວລົງສະແດງເຖິງຫຍັງ?



3 ກ່ອນເຂົ້າຫ້ອງຄວນເຮັດແນວໃດ? ກ່ອນຈະຕອບຄຳຖາມຂອງຄູນັກຮຽນຄວນເຮັດແນວໃດ?



4 ຖ້າເຫັນຄູຖືເຄື່ອງຫຼາຍຢ່າງກາຍມານັກຮຽນຄວນເຮັດແນວໃດ? ຄູເຫັນນັກຮຽນມາຢ້ຽມຢາມເວລາບໍ່ສະບາຍສີໜ້າຂອງຄູເປັນແນວໃດ?



ມາລະຍາດທີ່ດີຕໍ່ຄູແມ່ນສິ່ງທີ່ຖືກຕ້ອງ ເຊັ່ນ: ການເວົ້າຈາຕ້ອງສຸພາບອ່ອນຫວານ, ທັກທາຍສະບາຍດີດ້ວຍຄວາມຍິ້ມແຍ້ມແຈ່ມໃສ, ຂອບໃຈ, ຂໍໂທດ, ຂໍອະນຸຍາດພ້ອມທັງສະແດງຄວາມເຄົາລົບນັບຖືໃນເວລາໄປມາ ແລະ ຊ່ວຍເຫຼືອຕາມຄວາມສາມາດ.

ບົດທີ 6 ການຂອບໃຈ ແລະ ຂໍໂທດ

ມາສັງເກດຮູບພາບນຳກັນ

1 ນັກຮຽນເຫັນຫຍັງໃນຮູບນີ້? ເປັນຫຍັງເດັກຍິງຈຶ່ງຂອບໃຈ?



2 ນັກຮຽນໃນຮູບພາບກຳລັງເຮັດຫຍັງ? ນັກຮຽນຄວນເອົາແບບຢ່າງບໍ? ຍ້ອນຫຍັງ?



3 ເກີດຫຍັງຂຶ້ນຢູ່ໃນຮູບພາບ? ນັກຮຽນຊາຍສະແດງມາລະຍາດຖືກແລ້ວບໍ່?



4 ຖ້າມີຄົນເວົ້າບໍ່ສຸພາບນຳແລ້ວເຂົາຂໍໂທດນັກຮຽນຄວນເຮັດແນວໃດ?



ການຮູ້ຈັກກ່າວຄຳຂອບໃຈ ແລະ ຂໍໂທດ ແມ່ນມາລະຍາດທີ່ດີຕໍ່ກັນນັກຮຽນຕ້ອງຮູ້ສຳນຶກຜິດ, ຮູ້ກ່າວຄຳວ່າຂໍໂທດ ແລະ ແກ້ໄຂສິ່ງທີ່ຕົນເອງໄດ້ກະທຳຜິດພາດ ຈຶ່ງຈະເຮັດໃຫ້ນັກຮຽນໄດ້ຮັບຄວາມຮັກແພງຈາກຄູ ແລະ ໝູ່ເພື່ອນ.

ບົດທີ 7 ຄວາມຮັກແພງໝູ່ເພື່ອນໃນໂຮງຮຽນ

ມາສັງເກດຮູບພາບນຳກັນ

1 ນັກຮຽນຍິງເອົາຫຍັງໃຫ້ໝູ່? ສີໜ້າຂອງລາວເປັນແນວໃດ?



2 ນັກຮຽນແຕ່ລະກຸ່ມໃນຮູບພາບກຳລັງເຮັດຫຍັງ?



3 ນັກຮຽນກຳລັງເຮັດຫຍັງ? ຖ້າເຫັນໝູ່ລົ້ມ ນັກຮຽນຄວນເຮັດແນວໃດ?



4 ນັກຮຽນຊາຍກຳລັງເຮັດຫຍັງ? ແມ່ນພຶດຕິກຳທີ່ດີບໍ່? ນັກຮຽນຄວນເຮັດຕາມ ຫຼື ບໍ່?



ການສະແດງຄວາມຮັກແພງໝູ່ເພື່ອນໃນໂຮງຮຽນສະແດງອອກ ເຊັ່ນ: ມີນ້ຳໃຈແບ່ງປັນສິ່ງຂອງ, ໃຫ້ກຽດ ແລະ ຊ່ວຍເຫຼືອກັນ, ບໍ່ເອົາສິ່ງຂອງໝູ່ເພື່ອນ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ໃຊ້ຄຳເວົ້າທີ່ບໍ່ສຸພາບ.

ບົດທີ 8 ການເຄົາລົບທຸງຊາດ

ມາສັງເກດຮູບພາບນຳກັນ

1 ຮູບພາບນີ້ແມ່ນຮູບຫຍັງ? ປະກອບມີຈັກສີຄືສີໃດແດ່?




2 ນັກຮຽນກຳລັງເຮັດຫຍັງ? ວັນຫຍັງພວກເຮົາເຄົາລົບທຸງຊາດ?



3 ນັກຮຽນເຮັດຫຍັງ?




4 ເວລາເຄົາລົບທຸງຊາດນັກຮຽນຄວນປະຕິບັດຕົນເອງແນວໃດ?



5 ເປັນຫຍັງນັກຮຽນ 4 ຄົນ ຈຶ່ງບໍ່ເຂົ້າແຖວເຄົາລົບທຸງຊາດ?



6 ໄລ່ຍອກັນເວລາເຄົາລົບທຸງຊາດ ນັກຮຽນຄວນເອົາເປັນແບບຢ່າງບໍ່?




ທຸງຊາດລາວແມ່ນສັນຍະລັກປະຈຳຊາດລາວ. ສະນັ້ນ, ເວລາເຄົາລົບທຸງຊາດ ຕ້ອງນຸ່ງເຄື່ອງເປັນລະບຽບຮຽບຮ້ອຍ, ຢືນກົງ, ສາຍຕາແນມເບິ່ງຜືນທຸງ, ຕັ້ງໃຈຮ້ອງ ເພງຊາດໃຫ້ຖືກຕ້ອງ, ບໍ່ວິນແຊວ ແລະ ບໍ່ເໜັງຕີງ.

ບົດທີ 9 ການຮັກສາເຄື່ອງຮຽນ ແລະ ເຄື່ອງໃຊ້

ມາສັງເກດຮູບພາບນຳກັນ

1 ນັກຮຽນເຫັນຫຍັງແດ່ຢູ່ເທິງໂຕະ? ເດັກນ້ອຍໃນຮູບພາບກຳລັງເຮັດຫຍັງ?



2 ເດັກນ້ອຍໃນຮູບພາບກຳລັງເຮັດຫຍັງ?



3 ນັກຮຽນໃນຮູບພາບມີຖົງໃສ່ປຶ້ມໝົດທຸກຄົນແລ້ວບໍ? ຈະເກີດຫຍັງຂຶ້ນກັບປຶ້ມ ຖ້າເຮົາບໍ່ເອົາປຶ້ມໃສ່ຖົງໄປໂຮງຮຽນ?



4 ນັກຮຽນສອງຄົນໃນຮູບພາບກຳລັງເຮັດຫຍັງ? ພວກເຮົາຄວນຮັກສາປຶ້ມຮຽນແນວໃດ?



ເຄື່ອງຮຽນ, ເຄື່ອງໃຊ້ເປັນສິ່ງທີ່ມີຄຸນຄ່າຄວນຮັກສາໃຫ້ດີ ແລະ ສະອາດຈີບງາມ ເພື່ອນຳໃຊ້ໄດ້ດົນນານ.

ບົດທີ 10 ການນຸ່ງເຄື່ອງເປັນລະບຽບ ແລະ ສຸພາບ


ມາສັງເກດຮູບພາບນຳກັນ

1 ເດັກໃນຮູບພາບນຸ່ງຊຸດຫຍັງ?



2 ນັກຮຽນໃນຮູບພາບໃດທີ່ນຸ່ງເຄື່ອງເປັນລະບຽບ?





3 ຄົນໃນຮູບພາບນຸ່ງເຄື່ອງແບບໃດ? ພວກເຂົາກຳລັງເຮັດຫຍັງ?



4 ເດັກນ້ອຍໃນຮູບພາບນຸ່ງເຄື່ອງແບບໃດ? ພວກເຂົາກຳລັງເຮັດຫຍັງ?



ການນຸ່ງເຄື່ອງເປັນລະບຽບ, ສຸພາບ, ຮຽບຮ້ອຍ ແລະ ສະອາດຈີບງາມສະແດງ ເຖິງມາລະຍາດ, ການເຄົາລົບນັບຖືເຊິ່ງກັນ ແລະ ກັນ.

ບົດທີ 11 ນັກຮຽນດຸໝັ່ນ

ມາສັງເກດຮູບພາບນຳກັນ

1 ນາຍຄູກຳລັງເວົ້າຫຍັງ? ນັກຮຽນກຳລັງເຮັດຫຍັງ?



2 ເວລາຄູອະທິບາຍບົດຮຽນ ນັກຮຽນຄວນເຮັດແນວໃດ?




3 ກ່ອນຕອບຄຳຖາມ ນັກຮຽນຄວນເຮັດແນວໃດ? ນັກຮຽນໃນຮູບພາບເຮັດຖືກແລ້ວບໍ່?




4 ນັກຮຽນໃນຮູບພາບກຳລັງເຮັດຫຍັງ? ສີໜ້າຂອງພວກເຂົາເປັນແນວໃດ?



5 ນັກຮຽນກຳລັງເຮັດຫຍັງ?



6 ນັກຮຽນເຫັນຫຍັງແດ່ໃນຮູບພາບນີ້? ເດັກຊາຍເຮັດຫຍັງ? ຄວນເຮັດຫຍັງ?



ຄວາມດຸໝັ່ນຂອງນັກຮຽນສະແດງອອກ ເຊັ່ນ: ຕ້ອງຕັ້ງໃຈຮ່ຳຮຽນ, ຕັ້ງໃຈຟັງເວລາຄູອະທິບາຍບົດຮຽນ, ໝັ່ນແກ້ບົດຝຶກຫັດ, ຫັດຂຽນ, ຫັດອ່ານ, ມາໂຮງຮຽນບໍ່ຂາດ ແລະ ທັນເວລາ, ຝຶກຝົນຕົນເອງຮຽນໜັງສືໃຫ້ເກັ່ງຈຶ່ງໄດ້ຮັບຜົນສຳເລັດ.

ບົດທີ 12 ຄວາມສັດຊື່ຕໍ່ການຮຽນ

ມາສັງເກດຮູບພາບນຳກັນ

1 ນັກຮຽນແຕ່ລະກຸ່ມກຳລັງເຮັດຫຍັງ ແລະ ນັກຮຽນເອົາຫຍັງສິ່ງໃຫ້ນາຍຄູ?



2 ນັກຮຽນກຳລັງເຮັດຫຍັງ?



3 ນັກຮຽນກຳລັງເຮັດຫຍັງຢູ່ທາງຫຼັງນາຍຄູ? ສີໜ້າຂອງລາວເປັນແນວໃດ?



4 ນາຍຄູກຳລັງເຮັດຫຍັງ? ນັກຮຽນຍິງທີ່ນັ່ງຢູ່ທາງຫຼັງເຮັດຫຍັງ?



ຄົນທີ່ມີຄວາມສັດຊື່ຕໍ່ການຮຽນ ຈະເຮັດໃຫ້ຕົນເອງມີຄວາມກ້າວໜ້າໃນດ້ານການຮ່ຳຮຽນ, ນາຍຄູຍົກຍ້ອງ, ໝູ່ເພື່ອນໃຫ້ຄວາມເຄົາລົບນັບຖື, ເປັນທີ່ຮັກແພງຂອງພໍ່ແມ່ ແລະ ຍາດພີ່ນ້ອງ.


ບົດທີ 13 ຄວາມສັດຊື່ຕໍ່ຕົນເອງ

ມາສັງເກດຮູບພາບນຳກັນ

1 ເດັກຊາຍໃນຮູບພາບເຊື່ອງເອົາຫຍັງ? ນັກຮຽນຄວນເຮັດແນວນີ້ບໍ່? ຍ້ອນຫຍັງ?



2 ເດັກຍິງ ແລະ ເດັກຊາຍກຳລັງກິນຫຍັງ? ພວກເຂົາກິນເຂົ້າໜົມນຳກັນບໍ່?



3 ເອື້ອຍກຳລັງຊອກຫຍັງໃນຖົງ? ເດັກຊາຍກຳລັງເອົາຫຍັງສົ່ງໃຫ້ເອື້ອຍ?



4 ເດັກຊາຍໃນຮູບພາບກຳລັງຮັບເອົາຫຍັງນຳເອື້ອຍ?



ຄວາມສັດຊື່ຕໍ່ຕົນເອງເປັນສິ່ງທີ່ດີ, ຄົນທີ່ມີຄວາມສັດຊື່ຈະເຮັດໃຫ້ການດຳລົງຊີວິດມີຄວາມກ້າວໜ້າ ແລະ ເປັນທີ່ຮັກຂອງພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ໝູ່ເພື່ອນ.

ບົດທີ 14 ກ້າຮັບຜິດ ແລະ ປ່ຽນແປງ

ມາສັງເກດຮູບພາບນຳກັນ

1 ເດັກຊາຍໃນຮູບພາບກຳລັງບອກຫຍັງກັບເອື້ອຍ ແລະ ສີໜ້າເອື້ອຍລາວເປັນແນວໃດ?



2 ແຕ່ລະຄົນໃນຮູບພາບກຳລັງເຮັດຫຍັງ? ເດັກຊາຍກຳລັງເຮັດຫຍັງ?



3 ນັກຮຽນກຳລັງຫຼິ້ນຫຍັງ? ຖ້າເຮັດໝາກບານຖືກໝູ່ນັກຮຽນຄວນເຮັດແນວໃດ?



4 ແລ່ນຢອກກັນແຄມທາງເປັນອັນຕະລາຍບໍ? ເມື່ອແມ່ເອີ້ນມາຕັກເຕືອນເດັກທັງສອງ ຈະເຮັດແນວໃດ?





ຄົນທີ່ມີຄວາມກ້າຫານ, ກ້າຮັບຜິດ ແລະ ປ່ຽນແປງຈະເຮັດໃຫ້ຕົນເອງມີຄວາມ ກ້າວໜ້າ ແລະ ໄດ້ຮັບຄວາມຮັກແພງໄວ້ເນື້ອເຊື່ອໃຈຈາກທຸກຄົນ.

ບົດທີ 15 ການໃຫ້ ແລະ ການຮັບທີ່ບໍ່ຖືກຕ້ອງ

ມາສັງເກດຮູບພາບນຳກັນ

1 ນັກຮຽນຍິງເດັດດອກໄມ້ຈາກສວນໂຮງຮຽນ, ເປັນສິ່ງທີ່ຄວນເຮັດບໍ?



2 ນັກຮຽນຍິງເອົາບັນທັດໃຫ້ນັກຮຽນຊາຍ, ເປັນຫຍັງລາວຈຶ່ງເອົາບັນທັດໃຫ້ເດັກຊາຍ?



3 ຄູສອບຖາມຄວາມຈິງນຳນັກຮຽນ, ຄູເວົ້າຫຍັງແດ່ກັບນັກຮຽນໃນຫ້ອງ?



4 ນັກຮຽນຄິດວ່າ ພວກເຂົາທັງສອງຄວນປະຕິບັດຕົນແນວໃດ ຫຼັງຈາກຖືກຄູຕັກເຕືອນ?



ການໃຫ້ ແລະ ການຮັບທີ່ບໍ່ຖືກຕ້ອງ ແມ່ນສິ່ງທີ່ບໍ່ດີ ແລະ ບໍ່ຄວນເອົາເປັນແບບຢ່າງ ເຊັ່ນ: ການເອົາສິ່ງຂອງໃຫ້ໝູ່ ເພື່ອໃຫ້ລາວຊ່ວຍປິດບັງຄວາມຜິດ ແລະ ອື່ນໆ. ນັກຮຽນທຸກຄົນຕ້ອງມີຄວາມສັດຊື່, ບໍ່ເອົາສິ່ງຂອງຈ້າງຄົນອື່ນ ຫຼື ຮັບເອົາສິ່ງຂອງຈາກຄົນອື່ນເພື່ອປິດບັງສິ່ງທີ່ບໍ່ດີ.

ບົດທີ 16 ການເປັນແບບຢ່າງໃຫ້ນ້ອງ

ມາສັງເກດຮູບພາບນຳກັນ

1 ເດັກຍິງກຳລັງສອນນ້ອງຊາຍເຮັດຫຍັງ?



2 ເດັກຊາຍທັງສອງກຳລັງເຮັດຫຍັງ? ເພື່ອເປັນແບບຢ່າງທີ່ດີໃຫ້ນ້ອງນັກຮຽນຄວນເຮັດແນວໃດ?



3 ເດັກຊາຍກຳລັງເຮັດຫຍັງຊ່ວຍແມ່, ນັກຮຽນຄວນເຮັດແນວໃດ ເພື່ອເປັນແບບຢ່າງ?



4 ເດັກໃນຮູບພາບກຳລັງຍາດຫຍັງກັນ? ເອື້ອຍຄວນເຮັດແນວໃດ ເພື່ອເປັນແບບຢ່າງໃຫ້ນ້ອງ?



ການເປັນແບບຢ່າງໃຫ້ນ້ອງຄື: ປະຕິບັດຕໍ່ນ້ອງດ້ວຍຄວາມຮັກ ແລະ ເບິ່ງແຍງນ້ອງຊ່ວຍພໍ່ແມ່, ພານ້ອງຮຽນໜັງສື, ພານ້ອງມ້ຽນເຄື່ອງຮຽນ, ເຄື່ອງໃຊ້, ຂອງຫຼິ້ນ, ນຸ່ງເຄື່ອງໃຫ້ນ້ອງ,ໃສ່ເກີບໃຫ້ນ້ອງ, ປ້ອນເຂົ້ານ້ອງ ແລະ ເປັນໝູ່ທີ່ດີໃຫ້ນ້ອງ.

ບົດທີ 17 ຄວາມກ້າຫານ

ມາສັງເກດຮູບພາບນຳກັນ

1 ນັກຮຽນເຄີຍສະແດງຄວາມກ້າຫານໃນການຕອບຄຳຖາມຄູ ຢູ່ໜ້າກະດານບໍ?



2 ເດັກຊາຍນີ້ເຮັດຫຍັງ? ລາວກຳລັງເວົ້າຫຍັງກັບແມ່ຂອງລາວ?



3 ເດັກໃນຮູບພາບກຳລັງເວົ້າຫຍັງກັບພໍ່ຂອງລາວ?



4 ເດັກຊາຍສອງຄົນກຳລັງຈະເຮັດຫຍັງ? ເຈົ້າຈະບອກເດັກຊາຍສອງຄົນນັ້ນວ່າແນວໃດ?




ຄວາມກ້າຫານ ແມ່ນຄວາມໝັ້ນໃຈໃນຕົນເອງ ແລະ ມີຄວາມກ້າສະແດງອອກທາງດ້ານຄຳເວົ້າ ແລະ ການກະທຳ ເຊັ່ນ: ການປະກອບຄຳຄິດເຫັນຕໍ່ຜູ້ອື່ນ, ກ້າຮັບຜິດຊອບຕໍ່ສິ່ງທີ່ຕົນເອງເຮັດ, ການຕອບ ຫຼື ຕັ້ງຄຳຖາມໃນເວລາຮຽນ ແລະ ການແນະນຳໃຫ້ຢຸດການສູບຢາ.

ບົດທີ 18 ການແບ່ງປັນສິ່ງຂອງ

ມາສັງເກດຮູບພາບນຳກັນ

1 ນັກຮຽນຈະແບ່ງຂອງຫຼິ້ນໃຫ້ໝູ່ຄູ່ ຫຼື ນ້ອງແນວໃດ?



2 ນັກຮຽນຈົ່ງບອກຊື່ບັນດາສິ່ງຂອງໃນຮູບພາບນີ້ ທີ່ສາມາດແບ່ງປັນໃຫ້ກັນໄດ້?



3 ໃນຄອບຄົວນີ້ ພວກເຂົາໄດ້ແບ່ງປັນຫຍັງໃຫ້ກັນແດ່?



4 ເດັກຍິງກຳລັງແບ່ງຫຍັງໃຫ້ແມ່? ນັກຮຽນສາມາດແບ່ງປັນຫຍັງແດ່ໃຫ້ຄົນໃນຄອບຄົວ?



ການແບ່ງປັນສິ່ງຂອງແມ່ນສະແດງເຖິງຄວາມມີນ້ຳໃຈຂອງຕົນເອງຕໍ່ຄົນອື່ນ ເຊັ່ນ: ແບ່ງປັນຂອງຫຼິ້ນ, ເຄື່ອງຮຽນ, ເຄື່ອງນຸ່ງ ແລະ ອາຫານໃຫ້ຄົນໃນຄອບຄົວ ແລະ ຜູ້ອື່ນ ເພື່ອເປັນການຊ່ວຍເຫຼືອກັນ.

ບົດທີ 19 ຄອບຄົວຂອງຂ້ອຍ

ມາສັງເກດຮູບພາບນຳກັນ

1 ເດັກຊາຍຊີ້ມືໃສ່ຫຍັງ? ໃນຮູບພາບທີ່ຕິດຢູ່ຝາເຮືອນມີຈັກຄົນ ແລະ ມີໃຜແດ່?




2 ຮູບພາບລຸ່ມນີ້ມີໃຜແດ່? ພວກເຂົາກຳລັງເຮັດຫຍັງ?



3 ເດັກຊາຍໃນຮູບພາບກຳລັງເຮັດຫຍັງ? ສີໜ້າຂອງແມ່ເປັນແນວໃດ?



4 ນັກຮຽນເຫັນຫຍັງແດ່ໃນຮູບພາບ? ພວກເຂົາພາກັນໄປໃສ?



ຄອບຄົວຕ້ອງມີຄວາມສາມັກຄີ, ຮັກແພງຊ່ວຍເຫຼືອກັນ ເພື່ອສ້າງໃຫ້ຄອບຄົວມີຄວາມອົບອຸ່ນ ແລະ ຢູ່ຮ່ວມກັນຢ່າງມີຄວາມສຸກ.

ບົດທີ 20 ມາລະຍາດຕໍ່ຄອບຄົວ

ມາສັງເກດຮູບພາບນຳກັນ

1 ນັກຮຽນສອງຄົນກຳລັງເຮັດຫຍັງ? ການຍົກມືນົບແມ່ແມ່ນມາລະຍາດທີ່ດີບໍ່? ນັກຮຽນຄວນເອົາເປັນແບບຢ່າງບໍ່?



2 ນັກຮຽນເຫັນຫຍັງໃນຮູບພາບ? ເດັກນ້ອຍສອງຄົນຕັ້ງໃຈຟັງແມ່ບອກແລ້ວບໍ່? ເປັນຫຍັງແມ່ຈຶ່ງຊີ້ມືໃສ່ເສັ້ນທາງລົດ?



3 ເດັກນ້ອຍຊາຍກຳລັງເຮັດຫຍັງ? ເອື້ອຍຂອງລາວມີສີໜ້າແນວໃດ?



4 ຜູ້ໃຫຍ່ກຳລັງເອົາຫຍັງໃຫ້ເດັກນ້ອຍທັງສອງ? ເດັກນ້ອຍເຮັດແນວໃດກ່ອນຮັບເອົາ ສິ່ງຂອງຈາກຜູ້ໃຫຍ່? ນັກຮຽນຄວນເອົາເດັກນ້ອຍທັງສອງເປັນແບບຢ່າງບໍ່?



5 ເດັກນ້ອຍສອງຄົນເຮັດຫຍັງຕໍ່ໜ້າພໍ່ແມ່? ແລ່ນຢອກັນກາຍໜ້າພໍ່ແມ່ເປັນສິ່ງທີ່ຄວນເຮັດບໍ່?



6 ເວລາຍ່າງຜ່ານໜ້າແມ່ຕູ້ຄວນເຮັດແນວໃດ? ເດັກຊາຍໃນຮູບເຮັດຖືກແລ້ວບໍ່?



ມາລະຍາດຕໍ່ຄອບຄົວ ໝາຍເຖິງການປະພຶດຂອງຄົນຜູ້ໃດຜູ້ໜຶ່ງທີ່ມີຕໍ່ກັບຄົນໃນຄອບຄົວ ຂອງຕົນເອງ ເຊັ່ນ: ການຍໍມືນົບ, ຖາມສະບາຍດີ, ຄອບລາ, ກົ້ມຫົວລົງເວລາຍ່າງຜ່ານ ແລະ ໃຊ້ຄຳວ່າ: “ໂດຍ” ເວລາເວົ້າລົມກັບຄົນໃນຄອບຄົວ.

ບົດທີ 21 ການຊ່ວຍງານຄອບຄົວ

ມາສັງເກດຮູບພາບນຳກັນ

1 ເດັກຍິງ ແລະ ເດັກຊາຍກຳລັງຊ່ວຍກັນເຮັດຫຍັງ?



2 ເດັກນ້ອຍທັງສາມຄົນກຳລັງຊ່ວຍກັນເຮັດຫຍັງ?



3 ສະຖານທີ່ໃນຮູບພາບຢູ່ໃສ? ພວກເຂົາກຳລັງເຮັດຫຍັງ?



4 ເດັກຍິງ ແລະ ເດັກຊາຍກຳລັງເຮັດຫຍັງ?



5 ເດັກຊາຍ ແລະ ເດັກຍິງກຳລັງເຮັດຫຍັງ? ຜ່ານມານັກຮຽນເຄີຍປະຕິບັດຄືໃນຮູບພາບບໍ່?



6 ເດັກຊາຍເຮັດຫຍັງຊ່ວຍພໍ່? ລາວຄວນຫອບໄມ້ໜັກເກີນຄວາມສາມາດບໍ່?



ການຊ່ວຍວຽກໃນຄອບຄົວເປັນສິ່ງທີ່ດີ ແລະ ເປັນໜ້າທີ່ຂອງທຸກຄົນໃນຄອບຄົວ, ນັກຮຽນຄວນຊ່ວຍວຽກຄອບຄົວຕາມຄວາມສາມາດຂອງຕົນເອງ ຕົວຢ່າງ: ກວາດເຮືອນ, ລ້າງຖ້ວຍ, ລ້າງຈອກ, ເກັບເປັດ, ເກັບໄກ່, ໜຶ້ງເຂົ້າ, ຫົດສວນດອກໄມ້ ແລະ ເອົານ້ອງຊ່ວຍພໍ່ແມ່.

ບົດທີ 22 ຄວາມເມດຕາຕໍ່ຄົນໃນຄອບຄົວ

ມາສັງເກດຮູບພາບນຳກັນ

1 ນັກຮຽນຈະເຮັດຫຍັງຊ່ວຍພໍ່ແດ່ ຖ້າພໍ່ເຈັບ ຫຼື ບໍ່ສະບາຍ?



2 ອ້າຍກຳລັງເຮັດຫຍັງ ທີ່ສະແດງເຖິງຄວາມເມດຕາ?



3 ເວລາເຫັນນ້ອງໂສກເສົ້າ ນັກຮຽນຈະເຮັດແນວໃດ?



4 ເພື່ອສະແດງເຖິງຄວາມເມດຕາຕໍ່ອ້າຍ, ເອື້ອຍນ້ອງຂອງຕົນນັກຮຽນຈະເຮັດຫຍັງ?




ຄວາມເມດຕາສະແດງເຖິງການເບິ່ງແຍງໃນຍາມເຈັບປ່ວຍ ເຊັ່ນ: ປ້ອນເຂົ້າ, ເອົານ້ຳໃຫ້ກິນ, ເອົາຢາໃຫ້ກິນ, ໃຫ້ຄວາມຊ່ວຍເຫຼືອ, ໃຫ້ຄວາມເຫັນອົກເຫັນໃຈໃຫ້ຄວາມອົບອຸ່ນ, ໃຫ້ຄວາມຮັກ, ໃຫ້ກຳລັງໃຈ, ແບ່ງປັນສິ່ງຂອງ ແລະ ໃຫ້ຄວາມເຄົາລົບນັບຖືກັນ.

ບົດທີ 23 ຄວາມກະຕັນຍູຕໍ່ຄອບຄົວ

ມາສັງເກດຮູບພາບນຳກັນ

1 ເດັກທັງສອງໄດ້ເຮັດຫຍັງໃຫ້ພໍ່ ເພື່ອສະແດງຄວາມກະຕັນຍູ?



2 ເດັກເຫຼົ່ານີ້ ໄດ້ສະແດງຄວາມກະຕັນຍູຕໍ່ພໍ່ແມ່ແນວໃດ?



3 ເດັກທັງສອງຕັ້ງໃຈຮຽນໜັງສື ສະແດງເຖິງຄວາມກະຕັນຍູບໍ? ຍ້ອນຫຍັງ?



4 ເວລາພໍ່ແມ່ບອກສອນ, ນັກຮຽນຄວນເຮັດແນວໃດ ເພື່ອສະແດງເຖິງຄວາມກະຕັນຍູ?



ຄວາມກະຕັນຍູແມ່ນຄວາມຮູ້ບຸນຄຸນຕໍ່ພໍ່ແມ່ ແລະ ຄົນໃນຄອບຄົວສະແດງອອກຄື: ຟັງຄຳສັ່ງສອນ, ຕັ້ງໃຈຮຽນໜັງສື, ຮັກແພງສາມັກຄີ, ຊ່ວຍເຫຼືອ ພໍ່, ແມ່, ອ້າຍ, ເອື້ອຍ ແລະ ນ້ອງຕາມຄວາມສາມາດຂອງຕົນເອງ.


ບົດທີ 24 ການເຄົາລົບສະຖານທີ່ໃນເຮືອນ

ມາສັງເກດຮູບພາບນຳກັນ


1 ໃນຮູບພາບນີ້ ແຕ່ລະຄົນກຳລັງເຮັດຫຍັງ?



2 ເດັກຊາຍໃນຮູບພາບກຳລັງເຮັດຫຍັງ? ຖ້າເຫັນໝູ່ເຮັດຄືເດັກຊາຍນັກຮຽນຈະເຮັດແນວໃດ?



3 ຮູບພາບນີ້ສະແດງເຖິງຫຍັງ? ນັກຮຽນຄວນເອົາເປັນແບບຢ່າງບໍ່? ຍ້ອນຫຍັງ?



4 ເວລາຈະເຂົ້າເຮືອນ ນັກຮຽນຄວນເຮັດແນວໃດ? ເດັກຊາຍໃນຮູບພາບເຮັດຖືກແລ້ວບໍ່?




ຫ້ອງຄົວ, ຫ້ອງຮັບແຂກ, ຫ້ອງນັ່ງຫຼິ້ນ ແລະ ລະບຽງໜ້າເຮືອນເປັນສະຖານທີ່ສຳຄັນ ຄວນໃຫ້ຄວາມເຄົາລົບ ແລະ ປົກປັກຮັກສາໃຫ້ມີຄວາມສະອາດຈີບງາມຢູ່ສະເໝີ.

ບົດທີ 25 ການເຄົາລົບນັບຖືຜູ້ອາວຸໂສ

ມາສັງເກດຮູບພາບນຳກັນ

1 ເພື່ອສະແດງຄວາມເຄົາລົບປູ່ຍ່າຂອງເຈົ້າ ນັກຮຽນເຮັດແນວໃດ?



2 ເດັກນ້ອຍຍິງ ແລະ ຊາຍ ສະແດງຄວາມເຄົາລົບແນວໃດ?



3 ເດັກນ້ອຍຍິງ ແລະ ຊາຍກຳລັງເຮັດຫຍັງ?



4 ເບິ່ງໃບໜ້າຜູ້ອາວຸໂສເປັນແນວໃດ? ເປັນຫຍັງເພິ່ນຈຶ່ງຢາກຮ້າຍ?



ການເຄົາລົບນັບຖື ແມ່ນການສະແດງມາລະຍາດທີ່ດີຕໍ່ທຸກຄົນໂດຍສະເພາະແມ່ນຜູ້ອາວຸໂສ ຫຼື ຜູ້ມີບຸນຄຸນຕໍ່ຕົນເອງ, ການຍໍມືນົບ, ຖາມສະບາຍດີ, ເອົານ້ຳໃຫ້ເພິ່ນດື່ມ, ຍ່າງຜ່ານຕໍ່ໜ້າພວກເພິ່ນຕ້ອງກົ້ມຫົວລົງ, ໂອ້ລົມກັບເພິ່ນຕ້ອງເວົ້າ “ເຈົ້າ ຫຼື ໂດຍ” ຜູ້ອາວຸໂສ ເພື່ອສະແດງເຖິງການເຄົາລົບນັບຖື.

ບົດທີ 26 ມາລະຍາດໃນທີ່ສາທາລະນະ

ມາສັງເກດຮູບພາບນຳກັນ

1 ນັກຮຽນຄວນເຮັດແນວໃດ ເມື່ອເຫັນຄົນກຳລັງລົງຈາກລົດເມ?



2 ເກີດຫຍັງຂຶ້ນກັບແມ່ຕູ້ຜູ້ນີ້? ຍ້ອນຫຍັງລາວຈຶ່ງລົ້ມ?



3 ພວກເຮົາຄວນຖິ້ມຂີ້ເຫຍື້ອໃສ່ບ່ອນໃດ?



4 ພວກເດັກນ້ອຍນີ້ກຳລັງເຮັດຫຍັງ?




ມາລະຍາດໃນທີ່ສາທາລະນະ ໝາຍເຖິງພຶດຕິກຳທີ່ສະແດງອອກຂອງແຕ່ລະບຸກຄົນໃນ ການປະຕິບັດຕົນເອງໃຫ້ຖືກຕ້ອງ ແລະ ເໝາະສົມຕາມສະຖານທີ່ສາທາລະນະຕ່າງໆ ເຊັ່ນ: ບໍ່ຄວນຖິ້ມຂີ້ເຫຍື້ອຊະຊາຍ, ບໍ່ໃຊ້ສຽງດັງເກີນໄປ, ບໍ່ຢຽບຫຍ້າ, ບໍ່ເດັດດອກໄມ້, ບໍ່ລັດຄິວ ຫຼື ແຫຍ້ຄົນອື່ນເວລາຂຶ້ນ ຫຼື ລົງລິດເມ, ບໍ່ຂຶ້ນຢຽບໂຕະ, ຕັ່ງ ແລະ ອື່ນໆ.

ບົດທີ 27 ການຮັກສາສິ່ງຂອງສ່ວນລວມ

ມາສັງເກດຮູບພາບນຳກັນ


1 ນັກຮຽນຄວນຮັກສາຫ້ອງສະໝຸດ ແລະ ປຶ້ມແນວໃດ?



2 ແຕ່ລະຄົນໃນຮູບພາບກຳລັງເຮັດຫຍັງ ນັກຮຽນຄວນຊ່ວຍກັນອະນາໄມຫ້ອງຮຽນຂອງຕົນ ແນວໃດ?



3 ນັກຮຽນຊາຍກຳລັງຈີກໂປສເຕີ. ນັກຮຽນຄິດວ່ານັກຮຽນຍິງກຳລັງເວົ້າຫຍັງ?



4 ນັກຮຽນຄວນເຮັດແນວໃດ ຖ້າເຫັນໝູ່ກຳລັງຂີດໂຕະຕັ່ງໃນຫ້ອງຮຽນ?



ສິ່ງຂອງສ່ວນລວມປະກອບມີ: ໂຮງຮຽນ, ຫ້ອງຮຽນ, ໂຕະ, ຕັ່ງ, ກະດານ, ກະດານນ້ອຍ ຂອງນັກຮຽນ, ຫ້ອງສະໝຸດ, ໂປສເຕີ ຫຼື ຮູບໃນຫ້ອງຮຽນ, ບ່ອນຫຼິ້ນຂອງນັກຮຽນ, ປຶ້ມແບບຮຽນ, ຫ້ອງນ້ຳ, ຖັງຂີ້ເຫຍື້ອ ແລະ ອື່ນໆ. ພວກເຮົາຄວນຮັກສາເພື່ອນຳໃຊ້ໄດ້ດົນນານ.

ບົດທີ 28 ການຮັກແພງເພື່ອນບ້ານດຽວກັນ

ມາສັງເກດຮູບພາບນຳກັນ

1 ເດັກນ້ອຍກວັກມືເຮັດຫຍັງ? ນັກຮຽນມັກໄປຫຼິ້ນກັບໝູ່ຂອງເຈົ້າຢູ່ບ່ອນໃດ?



2 ເດັກນ້ອຍໃນຮູບພາບນີ້ຢູ່ໃສ? ເວລາໝູ່ເປັນໄຂ້ ນັກຮຽນຊ່ວຍເຫຼືອໝູ່ແນວໃດ?



3 ນັກຮຽນແບ່ງປັນຫຍັງແດ່ໃຫ້ໝູ່ຄູ່ ແລະ ເພື່ອນບ້ານ?



4 ເດັກຍິງ ແລະ ເດັກຊາຍ ຄວນເຮັດແນວໃດ? ເມື່ອເຫັນເດັກຍິງກຳລັງຍືນເບິ່ງເຄື່ອງຫຼິ້ນ? ນັກຮຽນຄວນຫຼິ້ນກັບໝູ່ຂ້າງເຮືອນບໍ່? ຖ້າມີໝູ່ຢາກຫຼິ້ນນຳ ນັກຮຽນຈະເຮັດແນວໃດ?




ເພື່ອນບ້ານ ແມ່ນໝູ່ເພື່ອນ ແລະ ອ້າຍ, ເອື້ອຍ, ນ້ອງທີ່ຢູ່ບ້ານດຽວກັນ, ທຸກຄົນຮັກແພງ ສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເຊັ່ນ: ການແບ່ງປັນສິ່ງຂອງ ຫຼື ອາຫານ ໃຫ້ກັນ, ການ ເວົ້າຈາທີ່ສຸພາບອ່ອນໂຍນນຳກັນ ແລະ ຫຼິ້ນມ່ວນຊື່ນຮ່ວມກັນຢ່າງມີຄວາມສຸກ.

ບົດທີ 29 ການເຄົາລົບນັບຖືຄົນໃນຊຸມຊົນ

ມາສັງເກດຮູບພາບນຳກັນ

1 ນັກຮຽນກຳລັງເຮັດຫຍັງ? ຄວນເອົາເປັນແບບຢ່າງບໍ?



2 ນັກຮຽນ ແລະ ຊາວບ້ານ ຄວນເຮັດແນວໃດ ເພື່ອສະແດງຄວາມເຄົາລົບນັບຖືຕໍ່ທ່ານໝໍ ທີ່ມາໃຫ້ຄວາມຮູ້?



3 ເວລາຢູ່ເທິງລົດເມ ພວກເຮົາຄວນສະແດງຄວາມເຄົາລົບນັບຖືຕໍ່ຜູ້ອື່ນແນວໃດ?



4 ເດັກນ້ອຍສະແດງຄວາມເຄົາລົບນັບຖືຜູ້ໃຫຍ່ແນວໃດ? ຄວນເອົາເປັນແບບຢ່າງບໍ່?




ການເຄົາລົບນັບຖືຄົນໃນຊຸມຊົນ ສະແດງອອກທາງດ້ານການປະພຶດເຊັ່ນ: ການໄປ ມາ, ການເວົ້າຈາ, ການໃຫ້ກຽດກັນ, ການນຸ່ງຖື, ການກິນ, ການທັກທາຍສະບາຍດີດ້ວຍໃບ ໜ້າຍິ້ມແຍ້ມແຈ່ມໃສ, ການວາງຕົວ ແລະ ປັບຕົວໃຫ້ເໝາະສົມກັບສະພາບແວດລ້ອມ.

ບົດທີ 30 ກ່ອນປິດສົກຮຽນ


ຊຸດທີ 1

ໃນໄລຍະພັກໂຮງຮຽນ ນັກຮຽນຈະໄດ້ພົບພໍ້ກັບຫຼາຍໆຄົນ ແລະ ຈະໄດ້ໄປຢ້ຽມຢາມສະຖານທີ່ຕ່າງໆ.


ສັງເກດຮູບພາບ: ນັກຮຽນໃຊ້ຝາຕຸກນ້ຳ ຫຼື ກ້ອນຫີນນ້ອຍວາງໃສ່ຮູບທີ່ຖືກຕ້ອງ.




ການລົງລົດເມຖືກຕ້ອງແລ້ວບໍ່?



ການຍ່າງແຄມທາງຂອງນັກຮຽນຖືກຕ້ອງແລ້ວບໍ່?



ການໄລ່ຍອກັນແຄມທາງເປັນອັນຕະລາຍບໍ່?



ການຂຶ້ນລົດເມຖືກຕ້ອງແລ້ວບໍ່?

ຊຸດທີ 2

ພວກເຮົາພົບປະກັບຍາດພີ່ນ້ອງ ແລະ ຄົນໃນຊຸມຊົນ.


ສັງເກດຮູບພາບ: ນັກຮຽນໃຊ້ຝາຕຸກນ້ຳ ຫຼື ກ້ອນຫີນນ້ອຍວາງໃສ່ຮູບພາບທີ່ນັກຮຽນບໍ່ຄວນເຮັດ ຍ້ອນຫຍັງ?



ຄວນໄປແລ່ນຫຼິ້ນຢູ່ບ່ອນໃດ?



ເດັກໃນຮູບພາບຫຼິ້ນຖືກບ່ອນແລ້ວບໍ?



ເວລາໄປຢາມພໍ່ເຖົ້າແມ່ເຖົ້າ, ນັກຮຽນຄວນສະແດງຄວາມເຄົາລົບນັບຖືແນວໃດ?



ເວລາພົບເຫັນແຂກ, ນັກຮຽນຄວນສະແດງຄວາມເຄົາລົບນັບຖືແນວໃດ?

ຊຸດທີ 3

ພວກເຮົາໄປຢາມເພື່ອນບ້ານ ແລະ ອອກໄປນອກກັບຄອບຄົວ.

ສັງເກດຮູບພາບ: ນັກຮຽນໃຊ້ຝາຕຸກນ້ຳ ຫຼື ກ້ອນຫີນນ້ອຍວາງໃສ່ຮູບພາບທີ່ນັກຮຽນບໍ່ຄວນເຮັດ ຍ້ອນຫຍັງ?




ເດັກໃນຮູບພາບກຳລັງເຮັດຫຍັງ?



ການກະທຳຂອງເດັກໃນຮູບພາບຖືກຕ້ອງແລ້ວບໍ?



ຫຼິ້ນບານຖືກບ່ອນແລ້ວບໍ?



ຄົນໃນຮູບພາບຢືນຢູ່ສະຖານທີ່ໃດ?

ຊຸດທີ 4

ໃນມື້ພັກຜ່ອນພວກເຮົາຢູ່ກັບຄອບຄົວ.

ສັງເກດຮູບພາບ: ນັກຮຽນໃຊ້ຝາຕຸກນ້ຳ ຫຼື ກ້ອນຫີນນ້ອຍວາງໃສ່ຮູບພາບທີ່ມີການປະພຶດທີ່ຖືກຕ້ອງ ຍ້ອນຫຍັງ?



ເປັນຫຍັງເດັກຊາຍຈຶ່ງເບິ່ງແຍງນ້ອງຊ່ວຍແມ່?



ຮູບພາບນີ້ນັກຮຽນຄວນເອົາເປັນແບບຢ່າງບໍ?



ນັກຮຽນໄດ້ຊ່ວຍວຽກພໍ່ແມ່ບໍ?



ເປັນຫຍັງເດັກຊາຍຈຶ່ງພະລາດລົ້ມ?

ເລົ່າເລື່ອງຕາມຮູບພາບ

ມື້ແມ່ນມື້ເຂົ້າຮຽນມື້ສຸດທ້າຍ ກ່ອນພັກໂຮງຮຽນ ນັກຮຽນຈະເຮັດຫຍັງແດ່?.
ສັງເກດຮູບພາບ: ນັກຮຽນຈົ່ງຈັດລຽງຮູບພາບລຸ່ມນີ້ໃຫ້ຖືກຕ້ອງຕາມລຳດັບ




ຂ້ອຍຍ່າງເມື່ອເຮືອນກັບໝູ່ຂອງຂ້ອຍ



ຂ້ອຍຊ່ວຍແມ່ຖືເຄື່ອງ



ຄອບຄູ່ກ່ອນເມື່ອເຮືອນ



ສະບາຍດີພໍ່ເຖົ້າແມ່ເຖົ້າ